ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 001 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 20.9.2017.

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ວ່າດ້ວຍ ຄ່າທຳນຽມທາງ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 2;
- ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 17/ຄປຈ, ລົງວັນທີ 16 ສິງຫາ 2017.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ:

### ມາດຕາ 1 ຈຸດປະສົງ

ລັດຖະບັນຍັດສະບັບນີ້ກຳນົດຫຼັກການ, ລະບຽບການ, ມາດຕະການກ່ຽວກັບການກຳນົດຄ່າທຳນຽມທາງປະຈຳປີເພື່ອຄຸ້ມຄອງລວມສູນ ແລະ ຈັດຕັ້ງປະຕິບັດຢ່າງເປັນເອກະພາບກັນໃນຂອບເຂດທົ່ວປະເທດ; ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ ດຳລົງຊີວິດ ແລະ ດຳເນີນການເຄື່ອນໄຫວທຸລະກິດ ຢູ່ໃນດິນແດນຂອງ ສປປ ລາວ ລ້ວນແຕ່ມີພັນທະເສຍຄ່າທຳນຽມທາງ;ຮັບປະກັນໃຫ້ທຸກແຫຼ່ງລາຍຮັບຈາກຄ່າທຳນຽມທາງ ຕ້ອງມອບເຂົ້າງົບປະມານແຫ່ງລັດຢ່າງລວມສູນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

### ມາດຕາ 2 ຄ່າທຳນຽມທາງ

ຄ່າທຳນຽມທາງແມ່ນ ການກຳນົດຄ່າຢຽບທາງ ຂອງ ຍານພາຫະນະ ທີ່ເປັນກຳມະສິດ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວທຸລະກິດ ໃນດິນແດນຂອງ ສປປ ລາວ.

ມາດຕາ 3 ຫລັກການ ການກຳນົດຄ່າທຳນຽມທາງ

ການກຳນົດຄ່າທຳນຽມທາງ ຈັດຕັ້ງປະຕິບັດຕາມຫລັກການດັ່ງນີ້ :

- ຈັດຕັ້ງປະຕິບັດຢ່າງລວມສູນໃຫ້ເອກະພາບໃນຂອບເຂດທົ່ວປະເທດ;
- ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້;
- ອີງໃສ່ແຕ່ລະປະເພດຍານພາຫະນະ, ຄວາມແຮງຂອງເຄື່ອງຈັກ, ນ້ຳໜັກບັນທຸກລວມທັງນ້ຳໜັກຂອງພາຫະນະ, ບ່ອນນັ່ງສຳລັບຜູ້ໂດຍສານລວມທັງຜູ້ຂັບຂີ່.

ມາດຕາ 4 ຍານພາຫະນະທີ່ຖືກເສຍຄ່າທຳນຽມທາງ

ຍານພາຫະນະທີ່ຕ້ອງເສຍຄ່າທຳນຽມທາງ ມີຄືດັ່ງນີ້:

- ລົດຈັກສອງລໍ້, ລົດສາມລໍ້;
- ລົດຂົນສົ່ງຂະໜາດນ້ອຍ, ກາງ ແລະ ໃຫຍ່;
- ຍານພາຫະນະທຸກປະເພດຊຶ່ງໄດ້ກຳນົດໄວ້ໃນມາດຕາ 5 ຂອງລັດຖະບັນຍັດສະບັບນີ້ ລ້ວນແຕ່ຕ້ອງໄດ້ຖືກເສຍຄ່າທຳນຽມທາງ, ຍົກເວັ້ນ ຍານພາຫະນະ ທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງລັດຖະບັນຍັດສະບັບນີ້;
- ລົດນຳເຂົ້າຊົ່ວຄາວເພື່ອຮັບໃຊ້ໂຄງການ ແລະ ມີກຳນົດເວລາ ຊຶ່ງໄດ້ຮັບອະນຸຍາດຂຶ້ນທະບຽນ ຈາກກະຊວງໂຍທາທິການ ແລະ ຂົນສົ່ງ.

ມາດຕາ 5 ຄ່າທຳນຽມທາງ

ຄ່າທຳນຽມທາງໄດ້ກຳນົດຕາມແຕ່ລະປະເພດຍານພາຫະນະຄືດັ່ງນີ້:

| ລ/ດ | ປະເພດຍານພາຫະນະຂົນສົ່ງ | ຄ່າທຳນຽມທາງ (ເປັນກີບ) |
|---|---|---|
| I | ລົດຈັກ | |
| 01 | ລົດຈັກທີ່ມີຄວາມແຮງແຕ່ 110 ຊຊ ລົງມາ | 15.000 |
| 02 | ລົດຈັກ ທີ່ມີຄວາມແຮງແຕ່ 111 ຊຊ ເຖິງ 150 ຊຊ | 20.000 |
| 03 | ລົດຈັກທີ່ມີຄວາມແຮງແຕ່ 151 ຊຊ ເຖິງ 200 ຊຊ | 30.000 |
| 04 | ລົດຈັກທີ່ມີຄວາມແຮງເກີນ 200 ຊຊຂຶ້ນໄປ | 100.000 |
| II | ລົດຂົນສົ່ງສ່ວນຕົວ | |
| 01 | ລົດເກັງ, ລົດຈິບ, ລົດຕູ້, ລົດກະບະທີ່ມີຄວາມແຮງແຕ່ 1.000 ຊຊ ລົງມາ | 100.000 |
| 02 | ລົດເກັງ, ລົດຈິບ, ລົດຕູ້, ລົດກະບະທີ່ມີຄວາມແຮງແຕ່ 1.001 ຫາ 1.600 ຊຊ | 150.000 |
| 03 | ລົດເກັງ, ລົດຈິບ, ລົດຕູ້, ລົດກະບະທີ່ມີຄວາມແຮງແຕ່ 1.601 ຫາ 2.000 ຊຊ | 200.000 |
| 04 | ລົດເກັງ, ລົດຈິບ, ລົດຕູ້, ລົດກະບະທີ່ມີຄວາມແຮງແຕ່ 2.001 ຫາ 2.500 ຊຊ | 250.000 |
| 05 | ລົດເກັງ, ລົດຈິບ, ລົດຕູ້, ລົດກະບະທີ່ມີຄວາມແຮງແຕ່ 2.501 ຫາ 3.000 ຊຊ | 300.000 |
| 06 | ລົດເກັງ, ລົດຈິບ, ລົດຕູ້, ລົດກະບະທີ່ມີຄວາມແຮງແຕ່ 3.001 ຫາ 4.000 ຊຊ | 350.000 |

| | | |
|---|---|---|
| 07 | ລົດເກັງ, ລົດຈິບ, ລົດຕູ້, ລົດກະບະ ທີ່ມີຄວາມແຮງແຕ່ 4.001 ຫາ 5.000 ຊີຊີ | 400.000 |
| 08 | ລົດເກັງ, ລົດຈິບ, ລົດຕູ້, ລົດກະບະທີ່ມີຄວາມແຮງແຕ່ 5.001 ຊີຊີ ຂຶ້ນໄປ | 500.000 |
| III | ລົດຂົນສົ່ງສິນຄ້າ | |
| 01 | ລົດບັນທຸກຂະໜາດນ້ອຍ ມີຄວາມແຮງ 2.500 ຊີຊີ ລົງມາ ຫລື ມີນ້ຳໜັກບັນທຸກລວມທັງນ້ຳໜັກລົດແຕ່ 3,5 ໂຕນລົງມາ | 150.000 |
| 02 | ລົດບັນທຸກຂະໜາດກາງ ມີຄວາມແຮງແຕ່ 2.501 ຫາ 5.000 ຊີຊີ ຫລື ມີນ້ຳໜັກບັນທຸກລວມທັງນ້ຳໜັກລົດເກີນ 3,5 ໂຕນຫາ 15 ໂຕນ | 200.000 |
| 03 | ລົດບັນທຸກຂະໜາດໃຫຍ່ ມີຄວາມແຮງ ເກີນ 5.000 ຊີຊີ ຂຶ້ນໄປ ແລະ ມີນ້ຳໜັກບັນທຸກລວມທັງນ້ຳໜັກລົດເກີນ 15 ໂຕນ ຫາ 30 ໂຕນ | 300.000 |
| 04 | ລົດບັນທຸກຂະໜາດໃຫຍ່ ມີຄວາມແຮງ ເກີນ 5.000 ຊີຊີ ຂຶ້ນໄປ ແລະ ມີນ້ຳໜັກບັນທຸກລວມທັງນ້ຳໜັກລົດເກີນ 30 ໂຕນ ຫາ 50 ໂຕນ | 400.000 |
| 05 | ລົດບັນທຸກຂະໜາດໃຫຍ່ ມີຄວາມແຮງ ເກີນ 5.000 ຊີຊີ ຂຶ້ນໄປ ແລະ ມີນ້ຳໜັກບັນທຸກລວມທັງນ້ຳໜັກລົດເກີນ 50 ໂຕນ ຂຶ້ນໄປທີ່ໄດ້ຮັບອະນຸຍາດໃຫ້ເຮັດການຂົນສົ່ງພິເສດ | 500.000 |
| IV | ລົດຂົນສົ່ງໂດຍສານ | |
| 01 | ລົດຈຳໂບ້, ລົດຕຸກໆ | 50.000 |
| 02 | ລົດຕູ້ ຫລື ລົດສອງແຖວຂະໜາດນ້ອຍ ມີຄວາມແຮງແຕ່ 2.500 ຊີຊີ ຫລື ມີບ່ອນນັ່ງແຕ່ 9 ຄົນລົງມາລວມທັງຜູ້ຂັບຂີ່ | 150.000 |
| 03 | ລົດຕູ້ ຫລື ລົດບັດຂະໜາດກາງມີຄວາມແຮງເກີນ 2.500 ຊີຊີ ຫາ 5.000 ຊີຊີ ຫລື ມີບ່ອນນັ່ງແຕ່ 10 ຄົນຫາ 35 ຄົນລວມທັງຜູ້ຂັບຂີ່ | 200.000 |
| 04 | ລົດບັດ ຫລື ລົດເມຂະໜາດໃຫຍ່ ມີຄວາມແຮງ ເກີນ 5.000 ຊີຊີ ຂຶ້ນໄປ ຫລື ມີບ່ອນນັ່ງເກີນ 35 ຄົນ ຂຶ້ນໄປ | 400.000 |

**ມາດຕາ 6 ຍານພາຫະນະທີ່ຖືກຍົກເວັ້ນຄ່າທຳນຽມທາງ**

ຍານພາຫະນະທີ່ຖືກຍົກເວັ້ນຄ່າທຳນຽມທາງມີດັ່ງນີ້ :

– ຍານພາຫະນະຮັບໃຊ້ວິຊາສະເພາະ ຂອງອົງການຈັດຕັ້ງລັດບໍລິຫານ-ວິຊາການ, ສະມາຄົມ, ມູນນິທິ ທີ່ເຄື່ອນໄຫວຮັບໃຊ້ສາທາລະນະປະໂຫຍດ ຊຶ່ງໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງ ເຊັ່ນ: ລົດກູ້ໄພ, ລົດຮັບ-ສົ່ງຄົນເຈັບຂອງໂຮງໝໍ, ລົດດັບເພີງ, ລົດຖ່າຍທອດວິທະຍຸ-ໂທລະພາບ ແລະ ລົດຮັບໃຊ້ລວມຂອງບັນດາສູນເສຍອົງຄະ;

– ຍານພາຫະນະຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໂດຍກົງ ( ບໍ່ລວມເອົາລົດຮັບໃຊ້ວຽກງານບໍລິຫານຂອງອົງການຕ່າງໆ );

– ລົດກົນຈັກໜັກເຊັ່ນ: ລົດຕັກ, ລົດຈົກ-ຕັກ, ລົດຕັກຂະໜາດນ້ອຍ, ລົດຈົກ, ລົດດູດ, ລົດກວດ, ລົດຍົກຍໍ, ລົດໂລ, ລົດບັນທຸກພາຍໃນສະໜາມໂຄງການກໍ່ສ້າງ, ລົດຂຸດເຈາະ, ລົດຂົນສົ່ງວັດສະດຸພາກສະໜາມ

ໂຄງການກໍ່ສ້າງ, ລົດໂລແບບສັ່ນສະເທືອນ, ລົດສີດຢາງປູທາງ, ລົດປູຢາງອາສະຟານ, ລົດໄຖ, ລົດກວາດຕົມຢາງ, ລົດຕັກຕົມຢາງ;

– ຍານພາຫະນະຂອງສະຖານທູດ, ສະຖານກົງສູນ, ອົງການຈັດຕັ້ງສາກົນທີ່ປະຈຳການຢູ່ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ;

– ຍານພາຫະນະຮັບໃຊ້ສຳລັບຜູ້ເສຍອົງຄະ ແລະ ຄົນພິການໂດຍສະເພາະ ( ຕາມທີ່ກຳນົດໄວ້ໃນລະຫັດເຄົ້າ 87.13 ຂອງສາລະບານອັດຕາພາສີ ).

**ມາດຕາ 7 ການຈັດຕັ້ງປະຕິບັດ**

ມອບໃຫ້ລັດຖະບານຊີ້ນຳກະຊວງການເງິນ ແລະ ກະຊວງທີ່ກ່ຽວຂ້ອງ ກຳນົດລະບຽບການ ແລະ ກົນໄກການຄຸ້ມຄອງການຈັດເກັບລາຍຮັບຄ່າທຳນຽມທາງຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດສະບັບນີ້ ໃຫ້ມີຄວາມສະດວກ, ວ່ອງໄວ, ຮັດກຸມ, ໂປ່ງໃສ, ຮັບປະກັນເກັບລາຍຮັບລວມສູນເຂົ້າງົບປະມານແຫ່ງລັດຢ່າງຄົບຖ້ວນ ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ລະບຽບການທີ່ວາງອອກ ພ້ອມທັງດຳເນີນການເຜີຍແຜ່, ແນະນຳ ແລະ ນຳພາການຈັດຕັ້ງປະຕິບັດເກັບໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ມາດຕາ 8 ຜົນສັກສິດ**

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດ ຂອງນິຕິກຳລຸ່ມກົດໝາຍທີ່ຂັດກັບລັດຖະບັນຍັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ